

ໃຊ້ຊີວິດ ແລະ ເຮັດການ

ຢູ່ ອານເບີຕາ

**LIVING AND WORKING IN ALBERTA**

## ປະຊາຊົນ (The people)

ຈາກ ການສຳຫຼວດ ພົນລະເມືອງ ປີ 1971, ພື້ນຖານເຊື້ອສາຍ ຂອງ ປະຊາຊົນຢູ່ ອານເບີຕາ ມີດັ່ງຕໍ່ໄປນີ້: 47 ເປີເຊັນ ອັງກິດ, 14 ເປີເຊັນ ເຢຍຣະມັນ, 8 ເປີເຊັນ ຢູແກຣນ, 6 ເປີເຊັນ ສການດີເນເວຍ, 6 ເປີເຊັນ ຝຣັ່ງ, 3 ເປີເຊັນ ອິນດຽນແດງ, ແລະ 16 ເປີເຊັນ ທີ່ເຫຼືອ ມັນ ມາຈາກ ປະເທດອື່ນໆ. ໝາຍວ່າ ພື້ນຖານເຊື້ອຊາດ ແຕກຕ່າງກັນ ຫຼາຍ, ຢູ່ ອານເບີຕາ ມີໂບດ ແລະ ສາສນາ ຫຼາຍແບບ.

ຕາມ ການສຳມະໂນເບິ່ງ ພົນລະເມືອງ ໃນປີ 1978*, ພົນລະເມືອງ ທັງໝົດ ຢູ່ ອານເບີຕາ ມີ 1.928.236 (ນຶ່ງລ້ານ ເກົ້າຮ້ອຍຊາວແປດ ພັນ ສອງຮ້ອຍສາມສິບຫົກຄົນ). ເກືອບເຄິ່ງນຶ່ງ ຂອງ ປະຊາຊົນພົນລະເມືອງ ຂອງ ແຂວງ ມີຕັ້ງ ຫຼັກຖານຢູ່ໃນ ສອງເມືອງ ທີ່ໃຫຍ່ ກໍສຸດຄື: ເອັດມັນຕັນ (Edmonton), ເມືອງຫຼວງ ຂອງ ແຂວງ ອານເບີຕາ. ພົນລະເມືອງ ຢູ່ເມືອງນີ້ ມີ 478.066 (ສີ່ຮ້ອຍ ເຈັດສິບແປດ ພັນ ກັບ ຫົກສິບຫົກຄົນ), ແລະ ຄານກາຣີ (Calgary) ມີ ພົນລະເມືອງ 505.637 (ຫ້າຮ້ອຍຫ້າ ພັນ ຫົກຮ້ອຍສາມສິບເຈັດ).

## ໜ້າດິນ (The Land)

ແຜ່ນດິນ ອານເບີຕາ ເປັນແຜ່ນດິນ ແຜ່ນທີ່ສີ່ ທີ່ກວ້າງທີ່ສຸດໃນ ປະເທດ ການາດາ ແລະ ມີໜ້າກວ້າງ ປະມານ 410.841 (ສີ່ຮ້ອຍສິບພັນ ແປດຮ້ອຍ ສີ່ສິບເອັດ) ກິໂລແມດ ກາເຣ ເຕັມໄປດ້ວຍ ທະເລສາບ ນ້ຳຈືດ. ລວງຍາວ ຂອງ ແຂວງນີ້ ມີ 1.217 (ພັນສອງຮ້ອຍສິບເຈັດ) ກິໂລແມດ ແຕ່ເໜືອ ຕອດໃຕ້ ແລະ ລະຫວ່າງ 293 ແລະ 650 ກິໂລແມດ ຂອງໜ້າກວ້າງ ຈາກ ທິດຕາເວັນ ອອກເຖິງ ທິດຕາເວັນຕົກ.

ຢູ່ທາງ ຟ່າຍ ດິນແດນ ຕາເວັນຕົກ ສ່ຽງເໜືອ, ອານເບີຕາ ເຕັມໄປ ດ້ວຍ ປ່າໄມ້ ແລະ ປ່າໄມ້ເຕັ້ງ ແລະ ຜູ້ຄົນກໍບໍ່ມີ ຫຼາຍ. ສ່ວນ ມາກ ປະຊາ

* ເທສບານ ຂອງ ອານເບີຕາ ທີ 30, 1978

ຄົນໃນເຂດນີ້ຖືກຈ້າງເຮັດວຽກຢູ່ໃນ ອຸດສາຫະກັມ ທາງນ້ຳມັນ ຫຼື ປ່າໄມ້. ໃນທາງເຂດ ກາງທິດເໜືອ ແຖບ ປີສ ຣິເວີ (Peace River) ເປັນເຂດ ນາ ທີ່ສວຍ ຫຼື ສວນບ້ອນຢ່ອນໃຈ, ເປັນທົ່ງນາ ແລະ ບໍ່ມີ ປ່າໄມ້ຫຼາຍ ແລະ ເປັນເຂດແດນ ປູກຝັງທີ່ຮັ່ງມີທີ່ສຸດໃນ ການາດາ.

ໃນເຂດໃຕ້ຂອງແຂວງ ອານເບີຕາ ແຜ່ນດິນເລີ່ມສູງຂຶ້ນແຕ່ ຈາກ ທົ່ງນາ* ມາເປັນ ໂນນ ແລະ ສາຍພູ ແລະ ພູຫີນ ຣ໊ອກກີ້ (Rocky Mountains) ຢູ່ທາງທິດຕາເວັນຕົກ, ເປັນ ພາກ ທີ່ມີຄວາມສວຍ ງາມ ທີ່ສຸດໃນອະເມຣິກາ ແລະ ການາດາ.

## ອາກາດ (The Climate).

ຍ້ອນວ່າ ແຂວງນີ້ ບໍ່ຢູ່ໃກ້ກັບ ມະຫາສມຸດ ປາຊີຟິກ (the Pacific Ocean). ກ່ອນຈະເຖິງ ມະຫາສມຸດ ກໍຕ້ອງ ຂ້າມ ພູ ຜາ ປະມານ 500 ກິໂລແມດ, ຍາມຣະດູໜາວ ຈຶ່ງໜາວຫຼາຍ ແລະ ຍາມຣະດູຮ້ອນ ຈຶ່ງຮ້ອນຫຼາຍ. ແຕ່ຄວາມໜາວຮ້ອນ ຂອງ ອາກາດ ກັບຝົນຫຼື ຫິມະ ຕ່າງກັນໄປແຕ່ລະປີ, ແຕ່ລະເດືອນ ແລະ ຕ່າງກັນໄປ ແຕ່ລະຣະດູ.

ຢູ່ຕາມເຂດທົ່ງນາ ສອງສ່ວນສາມຂອງ ທາດນ້ຳ ຕົກລົງເປັນ ຝົນໃນຣະດູຮ້ອນ, ແລະ ນຶ່ງສ່ວນ ສາມທີ່ເຫຼືອນັ້ນ ຕົກລົງເປັນ ຫິມະໃນຣະດູໜາວ. ບ່ອນອາກາດທີ່ຮ້ອນທີ່ສຸດ ແມ່ນ ເຂດ ຕາເວັນອອກສ່ຽງໃຕ້ ບ່ອນ ອຸທະພູມ ຂຶ້ນໄປມາ ຈາກ 15 ດີກຣີ ຫາ 30 ດີກຣີ ຊັງຕີກຣາດ. ອາກາດໜາວ ໃນຣະດູໜາວນັ້ນກໍປ່ຽນ ເລື້ອຍໆ ຍ້ອນລົມ ຊິນູກ (Chinook winds) ທີ່ພັດເອົາອາກາດ ອົບອຸ່ນເຂົ້າມາ ທາງຫຼຸບໆ ຫີນ ທີ່ຢູ່ທາງຕາເວັນ ອອກຂອງ ພູຣອກກີ້. ທາງຕາເວັນອອກສ່ຽງ ເໜືອ ເປັນພາກທີ່ ໜາວທີ່ສຸດໃນຣະດູໜາວ; ອາກາດລົງ ຫາ -20 ດີກຣີ ຊັງຕີກຣາດ. ແຕ່ອາກາດນີ້ ແຫ້ງ ແລະ ພາໃຫ້ຄົນພໍທົນ ຄວາມໜາວໄດ້. ຈະໃຊ້ຊີວິດຢູ່ນີ້ ແລະ ເຮັດການຢູ່ນີ້ ຄົນເຮົາຕ້ອງ ມີເຄື່ອງນຸ່ງ ສອງຈຳພວກ: ເຄື່ອງນຸ່ງ

* ທົ່ງນານີ້ມີການລ້ຽງສັດ ແລະ ການປູກຝັງ ແລະ ເຕັມໄປດ້ວຍຮ່ອງນ້ຳ.

ສຳລັບອາກາດຮ້ອນ (ເດືອນຫ້າ ຫາ ເດືອນສິບ) ແລະ ເຄື່ອງນຸ່ງໜາວ (ເດືອນສິບເອັດ ຫາ ເດືອນສີ່).

ແຜນທີ່ຂອງອາກາດທາງວິຕົກສາດ.

| | ເດືອນນຶ່ງ | | ເດືອນແປດ | | ຝົນຕົກ | ຫິມະຕົກ |
|---|---|---|---|---|---|---|
| | ສູງສຸດ | ຕ່ຳສຸດ | ສູງສຸດ | ຕ່ຳສຸດ | ມິນລີແມດ | ມິນລີແມດ |
| Calgary (ການກາຣີ) | ຫຼຸດ -5 | ຫຼຸດ -16 | 24 | 9 | 437 | 154 |
| Edmonton (ເອດມັນຕັນ) | ຫຼຸດ -10 | ຫຼຸດ -19 | 23 | 11 | 445 | 132 |
| Fort McMurray (ຟອດແມກາເມີເຣ) | ຫຼຸດ -16 | ຫຼຸດ 27 | 24 | 9 | 435 | 140 |
| Lethbridge (ເລບບຣິດ) | ຫຼຸດ -4 | ຫຼຸດ -15 | 26 | 11 | 436 | 181 |

ຮັບມາຈາກ : ຣັຖບານການາດາ ກົມອຸຕຸນິຍົມວິທະຍາ
ຣາຍລະອຽດ ເລີ່ມແຕ່ປີ 1941 ເຖິງປີ 1970 (ສາມສິບປີ)

ການຫຼິ້ນການມ່ວນ. (Recreation)

ສຳລັບທຸກໆຄົນ, ການຫຼິ້ນການມ່ວນມີຫຼາຍແນວ. ໃນຍາມຣະດູຮ້ອນ ຄົນສ່ວນຫຼາຍມັກໄປ "ການປັ້ງ" (camping), ຫຼິ້ນກ໊ອບ (golf), ຕີເທັນນິດສ໌ (tennis). ແຂວງນີ້ເຕັມໄປດ້ວຍສວນສາທາຣະນະ. ສວນສາທາຣະນະເຫຼົ່ານີ້ມີທະເລສາບນ້ຳຈືດ ທີ່ໃຊ້ໄວ້ລອຍຫຼິ້ນ, ຂີ່ເຮືອຫຼິ້ນ ແລະ ຫຼິ້ນສະກີໜ້ານ້ຳ. ບ່ອນໄປການປັ້ງນັ້ນກໍ່ມີບ່ອນພັກເຊົາ ມີຫົນທາງນ້ອຍໃນປ່າ ສຳລັບຜູ້ມັກໄປເດີນສາລະເວ.

ໃນຍາມຣະດູໜາວ, ຄົນມັກໄປເລ່ນສະກີນ້ຳກ້ອນ, ໃສ່ເກີບແລ່ນໜ້ານ້ຳກ້ອນ, curling, ຂີ່ຣົດຈັກໜ້າຫິມະ ແລະ ຂີ່ມ້າໄມ້ແລ້ວເລ່ນລົງຈາກພູນ້ອຍໆ (tobogganing). ກິລາແບບນີ້ມີຊື່ທີ່ສຸດສຳລັບຜູ້ໜຸ່ມ ແລະ ຜູ້ບໍ່ໜຸ່ມປານໃດ".

ຫ້ວຍນ້ຳ, ທະເລສາບນ້ຳຈືດ ແລະ ປ່າໄມ້ ທີ່ເໝາະເພື່ອ ພາ
ໃຫ້ການຕຶກເບັດ ແລະ ລ່າເນື້ອ ເປັນກິລາ ທີ່ນິຍົມ ແລະ ມີ
ຊື່ສຽງ ຫຼາຍ.

ລີວ ອານເບີຕາ ເປັນດິນທີ່ນິຍົມ ກິລາ ຫຼາຍ ແລະ
ກິລາ ສຳລັບ ຜູ້ຊົມ ດັ່ງ ຟຸດບອນ, ເບສບອນ, ຣອກກີ້ ແລະ
ເຕະບານ ມີຜູ້ຊົມຫຼາຍ. ຣັຖບານ ປະຈຳເມືອງ ແລະ ຣັຖບານ
ແຂວງ ພ້ອມດ້ວຍ ຣັຖບານ ປະຈຳທ້ອງຖິ່ນ ມີຄວາມສົນໃຈໃນ
ກິລາ ແລະການໄປຕັ້ງໄປພັກຜ່ອນ ມີຫຼາຍ ຈຶ່ງ ບຳລຸງ ຍູ້ຊ່ອຍ
ໃຫ້ວົງການ ທຸກທາງ ຍິ່ງ ຟື້ນຟູດີ ໃນ ທຸກໆ ຂະແໜງ.

ຖ້າສົນໃຈ ຕິດຕໍ່ ມາ:

Public Communications
Alberta Recreations & Parks
Sun Building
10363 – 108 Street
Edmonton, Alberta
T5J 1L7
ໂທຣະສັບ: 427 - 2008.

## ວັທນະທັມ (Culture).

ດ້ານວັທນະທັມແລ້ວ, ເພິ່ນມີຄຳຕອບຕໍ່ຄວາມສົນໃຈຂອງ
ທຸກໆຄົນ. ວັທນະທັມ ອານເບີຕາ (Alberta Culture) ອຸ້ມຊູ
ຣາຍການ ຕ່າງໆທີ່ມີຢູ່ໃນແຂວງນີ້ ດັ່ງ: ການເຂົ້າຮ່ວມໃນດ້ານ
ດົນຕຣີ, ການຟ້ອນ, ການສະແດງລະຄອນ, ການແຕ້ມຮູບ,
ການຄວດລາຍ, ການເຮັດໝໍ້, ການຕຳຜ້າ, ການຂຽນ, ແລະ
ດ້ານສິນຕ່າງໆ. ຕົວຢ່າງຂອງ ສິລປະ ແລະ ເຄື່ອງສະເຫຼົາ ໃນຫໍ
ພິພິທະພັນ ໄດ້ເອົາຂຶ້ນໃສ່ຣົດໃລະເຕັ້ນ ທ່ຽວໄປໃຫ້ຄົນໄດ້ຊົມ
ທຸກໆມຸມໃນແຂວງນີ້. ຫໍສະມຸດ ກໍເຕັມໄປດ້ວຍປື້ມ ຫຼາຍຢ່າງ
ຫຼາຍແນວ ສຳລັບອ່ານ ຫຼື ສຳລັບການຄົ້ນຄວ້າ.

ລາຍການພິເສດ ສຳລັບ ໝູ່ບ້ານຕ່າງໆ ທົ່ວແຂວງນີ້ ການ ສະແດງ ດົນຕຣີ, ມະໂຫຣີ ແລະ ການສະແດງ ອື່ນໆ ແຕ່ໃນ ເມືອງໃຫຍ່ໆ ຄື ໑໐ ລ້ານຄົນ ຫຼື ການ ກາຣ, ລາຍການປະຈຳ ຣະດູ ຄື ການ ສະແດງ ວົງດົນຕຣີ ໃຫຍ່, ການຣ້ອງເພງ, ການຟ້ອນ ບາເລ (ballet) ແລະ ດົນຕຣີສະໄໝ ທີ່ ສະແດງໂດຍ ສິລປິນທີ່ມີຊື່ສຽງທີ່ສຸດໃນໂລກ ມາສະແດງ.

## ເສຖກິດ (Economic Activities).

ຕາມປະວັດສາດແລ້ວ, ເສຖກິດຂອງ ອາເມຣິກາ ຂຶ້ນມາຈາກ ຄວາມອຸດົມສົມບູນ ຂອງ ຊັພຍາກອນ ທັມມະຊາດ. ອຸສາຫະກັມສ່ວນໃຫຍ່ ມີມາຈາກ ບໍ່ນ້ຳມັນ, ອາຍທີ່ເກີດຈາກເຊື້ອເພີງ, ແລະ ຕ່າງຫາກ ພ້ອມດ້ວຍ ການປູກເຂົ້າຈີ່, ເພັດເນົ່າສຳລັບສັດ ແລະ ການລ້ຽງສັດ. ບໍ່ແຮ່, ການປູກຝ້າຍ, ແລະ ອຸສາຫະກັມ ປ່າໄມ້ ເຄີຍເປັນ ແລະ ກໍຈະເປັນ ອຸສາຫະກັມ ທີ່ສຳຄັນ ສຳລັບ ການ ເພີ້ມພູນ ເສຖກິດຂອງ ອາເມຣິກາ. ຈຸດປະສົງ ຂອງ ອຸດສາຫະກັມ ແມ່ນ ການ ປ່ຽນແປງ ເສຖກິດໃນປະຈຸບັນ ໃຫ້ດີຂຶ້ນ ຈາກ ຊັພຍາກອນ ທັມມະຊາດ ທີ່ມີຢູ່ແລ້ວ. ໃນປີມໍ່ໆ ມານີ້ ໄດ້ເຫັນ ການກໍ່ເນື່ອງ ການ ຂະຫຍາຍຂອງ ອຸດສາຫະກັມ ອັນສຳຄັນ ທີ່ສອງຄື: ເຊື້ອ ເຄມີ ນ້ຳມັນ, ບ່ອນ ກັ່ນ ນ້ຳມັນ, ແຮງໄຟຟ້າ ນ້ຳຕົກ, ອາຫານ, ເຄື່ອງດື່ມ ແລະ ບ່ອນ ລໍ່ໂລຫະ.

ເສຖກິດໃນການທ່ອງທ່ຽວ ກໍກ້າວໜ້າໄວ. ຊັພຍາກອນຂອງ ອາເມຣິກາ ບໍ່ໄດ້ຖືກຂຍາຍ ແລະ ເຮັດໃຫ້ ກ້າວໜ້າ ເທົ່ານັ້ນ ແຕ່ ກໍໄດ້ຖືກເກັບໄວ້ ໃຫ້ ພົລເມືອງ ແລະ ຜູ້ມາຢ້ຽມຢາມ ໄດ້ ເບິ່ງແລະໄດ້ຊົມ.

## ກ່ຽວກັບ ເຮືອນຊານບ່ອນຢູ່ (Housing).

ຣາຄາເຮືອນ ສູງຂຶ້ນ ຫຼາຍໃນປີທີ່ຜ່ານມາ ພາໃຫ້ການຊື້ເຮືອນ ເປັນລາຍຈ່າຍສ່ວນໃຫຍ່. ຄົນຫຼາຍໆຄົນ ຢູ່ໃນແຂວງນີ້, ໂດຍສະ

ເພາະ ພວກທີ່ ຕັ້ງຖິ່ນຖານ ຢູ່ໃນກຳແພງເມືອງ, ຂະເຈົ້າ ເຊົ່າ ຫ້ອງ ຫຼື ເຊົ່າເຮືອນ ໂດຍ ຈ່າຍ ຄ່າເຊົ່າ ແຕ່ລະເດືອນ ເອົາ ຈົນກວ່າ ຈະສາມາດຊື້ເຮືອນຕົວເອງໄດ້. ໂດຍທົ່ວໄປແລ້ວ, ບຸກຄົນ ເອົາ ສາມສິບເປີເຊັນ (30%) ຂອງ ເງິນເດືອນ ຂະເຈົ້າ ໄປ ຈ່າຍ ຄ່າ ເຊົ່າ ຫ້ອງ ຫຼື ເຊົ່າເຮືອນ.

ເມື່ອ ມາຮອດ ອານາເຂດ ເທື່ອທຳອິດ ຄວນເຊົ່າ ຫ້ອງ ຫຼື ເຮືອນຊົ່ວຄາວດີກວ່າ, ຈະເປັນ ຫ້ອງ ທີ່ມີເຄື່ອງເຮືອນຄົບ, ເປັນ ຫ້ອງເຮືອນ ເປົ່າ, ໂຮງແຮມ ຫຼື ໂມເຕນ (ນ້ອຍກວ່າໂຮງແຮມ ທັມມະດາ) ຈົນກວ່າ ຈະ ລື້ງເຄີຍ ກັບ ບ່ອນ ຊື້ຂອງ, ຕະຫຼາດ, ໂຮງຮຽນ, ໂບດ ແລະ ບ່ອນຈະ ຂີ່ລົດເມໄປການ. ຫຼັງຈາກນັ້ນ ທ່ານ ຄົງ ມີຄວາມຄິດ ແລະ ເຂົ້າໃຈ ດີ ວ່າ ຈະ ຢູ່ບ່ອນໃດ ດີ ແລະ ຫ້ອງ ຫຼື ເຮືອນ ແນວໃດຈະຖືກກັບ ຄວາມຕ້ອງການ.

ຢູ່ໃນ ໜັງສືພິມ, ສ່ວນມາກຢູ່ທາງຫຼັງ ມີ ບ່ອນໂຄສະນາ ຫ້ອງ ຫຼື ເຮືອນໃຫ້ເຊົ່າ ທຸກສະບັບ. ຢູ່ໃນແຂວງ ມີເກືອບທຸກໆບ່ອນ ໃນປະຈຸບັນ ເຮືອນ ຫຼື ຫ້ອງໃຫ້ເຊົ່າ ນັ້ນ ມີ ນ້ອຍ ແລະ ຈຳກັດທີ່ສຸດ. ຈະຊອກ ບ່ອນ ຢູ່ທີ່ ເໝາະສົມ ຖືກໃຈ ນັ້ນ ກິນເວລາ ແລະ ເຫື່ອແຮງ ຊອກ ຫຼາຍ.

ຖ້າມີ ຄຳ ຖາມ ແລະ ຕ້ອງການ ຄຳຕອບ ກ່ຽວກັບ ບ່ອນຢູ່, ຂຽນ ຫຼື ໂທລະສັບໄປ ບ່ອນເຫຼົ່ານີ້:

Alberta Housing Corporation
7th Floor, 10050 - 112 Street
Edmonton, Alberta T5K 2J1
Phone: 482-5821

Central Mortgage &
Housing Corporation
12315 Stony Plain Road
Edmonton, Alberta T5J 2M8
Phone: 482-3431

Edmonton Housing Authority
Community Housing Rentals
10829 - 105 Avenue
Edmonton, Alberta T5H 0K9
Phone: 420-6161

Alberta Housing Corporation
901 Centre Street, N.
Calgary, Alberta T2P 6E3
Phone: 276-8291

Central Mortgage &
Housing Corporation
540 - 12th Avenue, S.W.
Calgary, Alberta T2P 2N9
Phone: 265-6860

Calgary Housing Authority
640 - 9th Avenue, S.E.
Calgary, Alberta T2G 4V9
Phone: 269-3141

ຄ່ານ້ຳຄ່າໄຟ (utilities).
ນອກຈາກ ຄ່າເຊົ່າ ຫ້ອງ ຫຼື ບ່ອນແລ້ວ, ລາຍຈ່າຍຕື່ມອີກກໍ່ມີ: ທຸກໆເດືອນ ຕ້ອງຈ່າຍຄ່າໂທຣະສັບ, ຄ່ານ້ຳ, ຄ່າອາຍເຊື້ອເພີງ (gas) ແລະ ຄ່າໄຟຟ້າ. ຄວາມສະດວກຈາກ ນ້ຳໄຟ ຕ່າງໆ ໄດ້ຮັບມາ ຈາກ ບໍຣິສັດ ສ່ວນຕົວ ຫຼື ບໍຣິສັດ ຂອງຣັຖບານ. ລາງບ່ອນ ຣາຄາ ຄ່ານ້ຳໄຟ ເຊັ່ນ: ຄ່າອາຍເຊື້ອເພີງເຂົ້າ ປົນນຳ ຄ່າເຊົ່າບ່ອນຢູ່ ແຕ່ລະເດືອນ. ຖ້າບໍ່ດັ່ງນັ້ນ ຜູ້ເຊົ່າ ຕ້ອງ ຈັດການກັບບໍຣິສັດເຫຼົ່ານີ້ ດ້ວຍຕົວເອງ.

ຢູ່ ປະເທດ ການາດາ, ອາຍເຊື້ອເພີງ ແລະ ໄຟຟ້າ ໃຊ້ໃວ້ ເພື່ອໃຫ້ເຮືອນມີຄວາມອົບອຸ່ນ ແລະ ສຳລັບໃຊ້ເຄື່ອງເຮືອນ ຕ່າງໆ. ຄວາມແຮງ ຂອງໄຟຟ້າ ຕາມທົ່ວໄປແລ້ວ ໃຊ້ລຳດັບ 120 ວົນຕ໌ (volts), ແລະ ເຄື່ອງເຮືອນອື່ນໆ ໃຊ້ 240 ວົນຕ໌. ເຄື່ອງເຮືອນອື່ນໆ ທີ່ບໍ່ໃຊ້ລຳດັບໄຟຟ້ານີ້ ຄວນ ເອົາປ່ຽນ ຫຼື ເອົາອອກ.

ສຳລັບ ເຮືອນທີ່ມີສາມຫ້ອງນອນ ຣາຄາ ອາຍເຊື້ອເພີງ ເພື່ອເຮັດໃຫ້ເຮືອນອຸ່ນ ນັ້ນ ກິນ ປີລະ 320 ດອນລາ ຫາ 360 ດອນລາ, ເອົາແຕ່ ບ່ອນໃດຖືກ ຫຼື ແພງ ຢູ່ໃນທ້ອງແຂວງ. ລາງບ່ອນ ຄ່າໄຟຟ້າ ກິນ ປີລະ 175 ດອນລາ ແລະ ລາງບ່ອນ 370 ດອນລາ ຕໍ່ປີ; ຄ່ານ້ຳ ແລະ ຄ່າເທຂີ້ເຫຍື້ອ ລະຫວ່າງ 150 ດອນລາ ຫາ 250 ດອນລາ ຕໍ່ປີ, ຄ່າເຊົ່າໂທຣະສັບ ຣາຄາ 65 ຫາ 80 ດອນລາ ຕໍ່ປີ ແລະ ຄ່າເອົາໂທຣະສັບເຂົ້າ ນັ້ນ 18 ດອນລາ. ຣາຄາ ທີ່ບອກມາວ່າງ ເທິງນີ້ ປ່ຽນແປງໄປຕາມ ຂນາດ ຂອງເຮືອນ.

ການຂົນສົ່ງ (Transportation)
ການຂົນສົ່ງໄປມາ ໃນແຂວງນີ້ ສ່ວນໃຫຍ່ ແມ່ນ ຣົດສ່ວນຕົວ, ຣົດເມ, ຣົດໄຟ ແລະ ເຮືອບິນ.
ຄົນສ່ວນຫຼາຍ, ໂດຍສະເພາະ ຢູ່ເຂດນອກເມືອງ, ໃຊ້ຣົດສຳລັບ

ໃຊ້ລົດປະຈຳວັນ. ເຖິງແມ່ນວ່າ ແຕ່ບ່ອນນີ້ໄປຫາ ບ່ອນນີ້ຈະ ກວ້າງ ຫຼາຍກໍ່ດີ, ການສັນຈອນໄປມາ ກໍ່ນັບວ່າ ນ້ອຍລົງຍ້ອນ ຫົນທາງ ສະດວກສະບາຍ, ໂດຍມີທາງຢາງ ແລະ ທາງຫຼວງ ຍາວ ຍາວກວ່າ 1.600 ກິໂລແມດ. ຢູ່ຕາມເມືອງໃຫຍ່ ລົດໃຫຍ່ ຣົດ ເມ ຣະຫວ່າງ ບ້ານ, ຕາມເມືອງ ແລະ ຣະຫວ່າງໃຈເມືອງ ທົ່ວຕູອດແຂວງ. ຣົດໄຟ ຫ້າສາຍ ແລະ ສາຍການບິນເຈັດ ສາຍຮັບໃຊ້ ຄົນ ຕາມຫົວເມືອງ ແລະ ຕາມເມືອງຕ່າງໆ. ອານເບີຕາ ເປັນໃຈກາງ ການຕິດຕໍ່ ຄົມມະນາຄົມ ຣະຫວ່າງ ທາງເໜືອ ແລະ ຕູອດທຸກໆ ແຂວງໃນ ປະເທດ. ສາຍການ ບິນ ເໜືອ-ໃຕ້ ໄດ້ສ້າງຂຶ້ນມາເພື່ອ ພາໃຫ້ການທ່ຽວ ແລະ ການບິນສົ່ງ ສາຍເໜືອ ສະດວກສະບາຍ.

## TRANSPORTATION ການຄົມມະນາຄົມ

### Road, Rail and Air

ຖະໜົນ, ຣົດໄຟ ແລະ ທາງອາກາດ





ການໃຊ້ພາຫານະ (Operating a motor vehicle)

ສຳລັບປະຊາຊົນໃນແຂວງນີ້ ທີ່ຕ້ອງການ ຈະໃຊ້ພາຫານະ ຄວນ ຕິດຕໍ່ກັບ the Alberta Solicitor General, ແຂນງໃບຂັບຂີ່, Treasury Branch ຫຼື ຫ້ອງການທີ່ອອກໃບຂັບຂີ່ ຫຼື ບ່ອນລົງທະບຽນ ຣົດ. ບຸກຄົນທີ່ຍ້າຍເຂົ້າມາ ອານາເຂດ ຈາກແຂວງ ອື່ນໆ ບໍ່ຈຳເປັນ ຈະໄປເສັງ ໃບຂັບຂີ່ອີກ, ພຽງແຕ່ ແລກປ່ຽນໃບຂັບຂີ່ເທົ່ານັ້ນ. ບຸກຄົນ ຈາກ ສະຫະຣັຖ ອາເມຣິກາ ຄວນກວດ ສາຍຕາ ແລະ ຄວາມຮູ້ ທາງຂັບຂີ່ ກ່ອນຈະໄດ້ຮັບ ໃບຂັບຂີ່ຂອງ ອານາເຂດ. ຄົນຈາກພວກອື່ນໆ ຄວນ ເສັງແລະກວດສາຍຕາ, ຄວາມຮູ້ດ້ານ ຂັບຂີ່ ແລະ ສແດງ ການຂັບຂີ່ ກ່ອນຈະໄດ້ຮັບ ໃບຂັບຂີ່. ຣາຄາໃບຂັບຂີ່ ແມ່ນ 10 ດອນລາ ຕໍ່ ຫ້າ ປີ. ການ ປະກັນພັຍ ນັ້ນ ຄວນ ລົມກັບ ບໍຣິສັດ ປະກັນພັຍ. ຫຼັກຖານ ຂອງການເປັນເຈົ້າຂອງ ແລະ ບັດປະຈຳຕົວ ສອງຢ່າງ ຄວນເອົາ ສອດໃສ່ນຳໃບຮ້ອງຂໍ (ຄຳຮ້ອງ) ສຳລັບເອົາ ຣົດລົງທະບຽນ. ຄວນເອົາຣົດໄປ ປະກັນພັຍເສັຽ ກ່ອນ ທີ່ຈະເອົາລົງທະບຽນ.

ຣັຖບານ (Government).

ການປົກຄອງນີ້ມາ ສາມ ຕ້ານ:

- ສະຫະພັນຣັຖບານ ຫຼື ຣັຖບານຂອງ ການາດາ.
- ຣັຖບານ ປະຈຳແຂວງ ຫຼື ຣັຖບານຂອງ ອານາເຂດ
- ຣັຖບານ ແຫ່ງເທສບານ ສຳລັບ ເມືອງ, ບ້ານ, ຕາແສງ.

ຣັຖບານ ແຕ່ລະແຂນງ ມີ ການຮັບຜິດຊອບ ຂອງໃຜລາວ:

ຣັຖບານຂອງການາດາ ນັ້ນ ມີຄວາມຮັບຜິດຊອບໃນ ກົດໝາຍ, ກ່າກັບນຳ ພາສີ ຣາຍໄດ້, ປະກັນພັຍ ຍາມບໍ່ມີວຽກເຮັດ (unemployment insurance) ແລະ ເງິນບຳນານ, ກ່ຽວກັບ ກົດໝາຍໃນການເອົາຄົນ ເຂົ້າເມືອງ, ເຣື່ອງ ອາຊຍາກັມ, ຄວາມຕົກລົງໃນການຄ້າຂາຍ, ແລະ ຄວາມສຳພັນຣະຫວ່າງ ການາດາ ກັບ ປະເທດອື່ນໆ.

ຣັຖບານ ປະຈຳແຂວງນັ້ນ ມີ ການຮັບຜິດຊອບໃນເຣື່ອງ ກົດໝາຍ ໃນການ ສຶກສາ, ເຣື່ອງສຸຂພາບ, ການສັງຄົມ, ການເປັນເຈົ້າຂອງ,

ສວນສາທາຣະນະປະຈຳແຂວງ, ທະເລສາບນ້ຳຈືດ, ສາຍຫ້ວຍນ້ຳ, ແລະສາຍທາງໃນແຂວງ.

ຣັຖບານປະຈຳບ້ານ ຫຼືທ້ອງຖິ່ນ ມີຄວາມຮັບຜິດຊອບນຳ ພາສີຂອງການເປັນກັມສິດ, ຄວາມສະອາດຂອງຖນົນ, ການຊ່ອຍເຫຼືອເວລາມີໄຟໄໝ້, ຕຳຣວດ, ການເກັບຂີ້ເຫຍື້ອ, ການໃຊ້ສວນທາຣະນະ, ການຮັກສາຫົນທາງ, ຖນົນ ແລະ ນ້ຳທ່ອງໃນເຂດເທສບານເມືອງ.

## ພາສີ (Taxation)

ຄົນເຮັດການຢູ່ອານເບີ້ຕາ ຈ່າຍພາສີໃຫ້ຣັຖບານການາດາ ແລະ ຣັຖບານປະຈຳແຂວງ. ຜູ້ຮັບຜິດຊອບໃນການເກັບພາສີຣາຍໄດ້ ໃຫ້ຣັຖບານການາດາ ແມ່ນ Revenue Canada Taxation. ການແຈ້ງຣາຍໄດ້ໃຫ້ Revenue Canada ຄວນເຮັດໃຫ້ແລ້ວ ກ່ອນວັນທີ 30 April (ເດືອນສີ່) ທຸກໆປີ. ໃບຄຳຮ້ອງສຳລັບການແຈ້ງຣາຍໄດ້ ມີຢູ່ທຸກໆ ປ້ອດໄປສະນີ ຫຼື the Revenue Canada Taxation Office.

ພາສີຣາຍໄດ້ຢູ່ອານເບີ້ຕາ ຕ່ຳກວ່າເພື່ອນທີ່ສຸດໃນການາດາ. ພາສີສຳລັບການຊື້ເຄື່ອງ ກໍບໍ່ມີຢູ່ໃນແຂວງນີ້.

## ຣາຍໄດ້ພິເສດ (Social Benefits).

ເງິນສຳລັບຊ່ວຍຄອບຄົວ.

ຣັຖບານການາດາ ຊ່ອຍໃນເຣື່ອງການເງິນໃຫ້ທຸກໆຄົນ ທີ່ມີອາຍຸຕ່ຳກວ່າສິບແປດປີ ທີ່ພໍ່ແມ່ເປັນຜູ້ລ້ຽງເກືອ ຫຼື ພີ່ນ້ອງເປັນຜູ້ກຳກັບ. ຜູ້ທີ່ມີສິດຮັບເງິນນີ້ແມ່ນຜູ້ທີ່ເປັນຄົນສັນຊາດການາດາ, ຜູ້ອົພຍົບເຂົ້າເມືອງ (landed immigrants), ຫຼື ບຸກຄົນທີ່ມີອະນຸຍາດເຂົ້າມາໃນການາດາ ເປັນເວລາຕ່ຳກວ່າ ນຶ່ງປີ ແລະ ເປັນບຸກຄົນທີ່ຈ່າຍຄ່າພາສີຣາຍໄດ້ໃຫ້ຣັຖບານ. ເງິນຊ່ອຍເຫຼືອນີ້ ກໍມີພາສີຫັກເອົາອອກ ພາຍໃຕ້ກົດໝາຍຂອງການເສັຽພາສີ.

ສຳລັບຣາຍລະອຽດຕ່າງໆ ກ່ຽວກັບເງິນສຳລັບຊ່ວຍຄອບຄົວນັ້ນ, ຕິດຕໍ່ກັບ Income Security Office.

## ປະກັນພັຍ ຍາມບໍ່ມີວຽກເຮັດ (Unemployment Insurance)

ແຜນການ ປະກັນພັຍ ອັນນີ້ ໄດ້ຖືກຕັ້ງຂຶ້ນ ມາຈາກຣັຖບານ ເພື່ອປ້ອງກັນ ຄົນ ການາດາ ທຸກໆຄົນ ທີ່ສູນເສັຽຣາຍໄດ້ ຍ້ອນບໍ່ມີ ວຽກເຮັດ. ຜູ້ເປັນນາຍ ຫັກເງິນເດືອນຂອງລູກນ້ອງໂດຍກົງ ອອກ ແລ້ວ ລາວກໍ່ເອົາເງິນຂອງລາວເອງຕື່ມໃສ່ 1.4 ເທື່ອ ຂອງຈຳນວນເງິນທີ່ຫັກອອກຈາກຣາຍໄດ້ຂອງລູກນ້ອງ. ກ່ອນຈະສົ່ງຄຳຮ້ອງ ຂໍເງິນຊ່ວຍປະກັນພັຍເວລາວ່າງງານນີ້ ຕ້ອງເອົາເຈັ້ຽ ທີ່ຈະສະແດງໃຫ້ Canada Employment and Immigration Commission ເຫັນ ເພື່ອເປັນພະຍານວ່າເຈົ້າ ໄດ້ຖືກ ຕັດ ອອກ ຈາກ ວຽກ ເພື່ອເອົາເຂົ້າປະກັນພັຍ. ເພື່ອຈະຂໍເງິນ ປະກັນພັຍນີ້ ຕ້ອງມີ ນຳເບີ ບັດ ປະຈຳຕົວ (Social Insurance number) ແລະ ຕ້ອງໄດ້ເຮັດວຽກມາ ເປັນເວລາ ດົນ ເຕັບ. ສຳລັບ ຣາຍລະອຽດ ກ່ຽວກັບ ປະກັນພັຍເວລາວ່າງງານ ນີ້ ຕິດຕໍ່ກັບ the Canada Employment & Immigration Commission Office ບ່ອນຢູ່ໃກ້ກັບທ່ານເອງ.

## ເບັ້ຽບໍານານ (Canada Pension Plan)

ອົງການເບັ້ຽບໍານານ ການາດາ ແມ່ນ ວຽກຂອງ ຣັຖບານການາດາ ທີ່ໄດ້ຕັ້ງຂຶ້ນມາ ເພື່ອ ຊ່ວຍເຫຼືອ ຄົນໃນຍາມ ອອກກິນເບັ້ຽບໍານານ, ຍາມເສັຽ ອົງຄະ ຫຼື ຄວາມຕາຍ. ປີໃດ ແຜນການ ເບັ້ຽບໍານານນີ້ ມີ ຣາຍໄດ້ ເຈັດ ແນວ ຄື: ຜູ້ອອກກິນເບັ້ຽບໍານານ, ຜູ້ເສັຽອົງຄະ ທີ່ ຣາຍໄດ້ໃຫ້ລູກຂອງຜູ້ເສັຽອົງຄະ, ຜູ້ເປັນແມ່ໝ້າຍ ແລະ ພໍ່ໝ້າຍ ຜູ້ເສັຽ ອົງຄະ, ສຳລັບລູກກຳພ້າ, ແລະ ເງິນເປັນກ້ອນ ເອົາໃຫ້ຍາມເສັຽຊີວິດ.

ສຳລັບ ຣາຍລະອຽດ ຕິດຕໍ່ ກັບ Income Security Office.

## ເບັ້ຽບໍານານຂອງຜູ້ເຖົ້າ (Old Age Security Pension).

ເບັ້ຽບໍານານຂອງຜູ້ເຖົ້ານີ້ ແມ່ນ ເງິນທີ່ຈ່າຍໃຫ້ທຸກໆຄົນອາຍຸໃກ້ນກວ່າ ຫົກສິບຫ້າ ປີ ແລະ ຕັ້ງຊີວິດຢູ່ ການາດາ ຢ່າງ

ນ້ອຍ ສິບປີ. ບໍ່ຈຳເປັນຈະເອົາເຣັດການອອກ ກິນເບັ້ຽບຳນານ, ຄົນການາດາ ຫຼື ຜູ້ທີ່ເອົາເງິນເຂົ້າໃນ ແຜນການນີ້ ມີສິດໄດ້ຮັບ ເງິນເບັ້ຽບຳນານຕື່ມ.

ສຳລັບຣາຍລະອຽດ ກ່ຽວກັບ Old Age Security, Canada Pension Plan, ຫຼື Family Allowance, ຕິດຕໍ່ກັບ Income Security Office ນ້ອຍໃກ້ທີ່ຢູ່ຂອງທ່ານ:

ຢູ່ Edmonton ຕິດຕໍ່ກັບ:

10055 - 106 Street
Edmonton, Alberta
T5J 2Z6
Phone: 425-3540.

ຢູ່ Calgary ຕິດຕໍ່ກັບ:

805 - 8th Avenue S.W.
Calgary, Alberta
T2P 1H7
Phone: 231-5559.

## ດ້ານ ສຸຂພິບານ (Health Services)

ແຜນການ ປະກັນໄພ ດ້ານ ສຸຂພິບານ.

ຣັຖບານ ຂອງ ອານເບີຕາ ມີແຜນການ ສຸຂພິບານ ເພື່ອຊ່ວຍເຫຼືອ ປະຊາຊົນ ຂອງ ອານເບີຕາ ໃນເຣື່ອງ ເຈັບເປັນ ແລະ ຄ່າໂຮງໝໍ. ທຸກໆ ເດືອນຄ່າເສັ້ຽ ມີແຕ່ $7.65 ສຳລັບ ຄົນໂສດ ແລະ $15.30 ສຳລັບ ຄອບຄົວນຶ່ງ. ຜູ້ທີ່ເຂົ້າມາຢູ່ ອານເບີຕາ ຈາກປະເທດອື່ນ ຄວນເອົາຄອບຄົວ ລົງທະບຽນ ພາຍໃນຣະຫວ່າງ ນຶ່ງເດືອນ ຫຼັງຈາກ ມາຮອດການາດາ ເພື່ອຈະໄດ້ຮັບ ຄວາມຊ່ວຍເຫຼືອດ້ານ ສຸຂພິບານ. ຜູ້ທີ່ເຂົ້າມາ ຢູ່ ອານເບີຕາ ຈາກ ແຂວງອື່ນໆ ຕ້ອງລົງທະບຽນ ໃນ ມື້ທີ່ນຶ່ງຂອງ ເດືອນທີ່ສີ່ ຫຼັງຈາກ ມາເຖິງ ເພື່ອຈະໄດ້ຮັບ ຄວາມຊ່ວຍເຫຼືອ ໃນມື້ທີ່ນຶ່ງ ເດືອນທີ່ສາມ ຫຼັງຈາກ ປີ້ນມາເຖິງ. (ປີ້ນັບແຕ່ມື້ທີ່ ຄວາມຊ່ວຍເຫຼືອຂອງ ແຂວງອື່ນໝົດອາຍຸແລ້ວ)!!

ຖ້າບໍ່ລົງທະບຽນໃນມື້ນັ້ນ ຫຼືໃນເວລາບອກມານັ້ນ ເຈົ້າເອງ ເອງຈະເປັນຜູ້ຮັບຜິດຊອບ ສຳລັບຄ່າປົວຫຼືຄ່າໂຮງໝໍ ຈົນກວ່າ ເຈົ້າເອງຈະມີສິດລົງທະບຽນອີກ ໃນມື້ທີ່ນຶ່ງຂອງເດືອນທີສາມ ຫຼັງຈາກໄດ້ລົງທະບຽນກັບ ສຸຂພິບານຂອງອານເບີຕາ (Alberta Health Care).

ສຳລັບສາຍລະອຽດກ່ຽວກັບ Alberta Health Care ແລະ ຄຳຮ້ອງຄວາມຊ່ວຍເຫຼືອ ຕິດຕໍ່ກັບ :

Alberta Health Care Insurance Plan
Groat Road and 118th Avenue
P.O. Box 1360
Edmonton, Alberta
T5J 2N3
Phone: 427-1400.

Alberta Health Care Insurance Plan
Crosslands Building
629 B - 7th Avenue, S.W.
Calgary, Alberta
T2P 0Y9
Phone: 261-6411

<u>ແຜນການສຸຂພາບຕາມຕ້ອງການ</u> (Optional Health Services) ຖ້າໃຈມັກແລະຕ້ອງການເປັນສະມາຊິກຂອງ Alberta Blue Cross Plan ຈະເຈົ້າມີຣາຄາພິເສດໃຫ້ປະຊາຊົນ (ເອົາແຕ່ໃຈມັກ, ບໍ່ແມ່ນແຜນການທີ່ຈຳເປັນຕ້ອງເປັນສະມາຊິກ) ຈາກ (Alberta Health Care Insurance Plan). ແຜນການຕ້ອງມີຈ່າຍເງິນຄືນບາງສ່ວນໃຫ້ຫຼັງຈາກຈ່າຍຄ່າພິເສດຢູ່ໂຮງໝໍ ສຳລັບຫ້ອງພິເສດ, ສຳລັບໃຊ້ຣົດໂຮງໝໍ, ຄ່າຢາທີ່ທ່ານໝໍລົງບັນຊີໃຫ້ຊື້, ອົງຄະທຽມ, ຄ່າໝໍຫຼືນາງໝໍທີ່ມາປົວຢູ່ບ້ານ, ຄ່າປົວສະໝອງ, ຄ່າໝໍພິເສດ

ແລະ ຄ່າ ແຮ້ວ ຕົ້ນ ທາງ ມີຄວາມ ເຈັບປວດຈາກ ອຸບັດຕິເຫດ.
ຕິດຕໍ່ ຣາຍລະອຽດ ທີ່ :

10025 - 108 Street
Edmonton, Alberta
T5J 1K9
Phone: 429-5221

409 Woodward Tower
Lethbridge Centre
Lethbridge, Alberta
Phone: 328-6081

500 Central Block
5000 Gaetz Avenue
Red Deer, Alberta
T4N 6C2
Phone: 342-7008

211 Chinook Centre
6455 MacLeod Trail
Calgary, Alberta
T2H 0K9
Phone: 253-0171

31 Prairie Mall
11801 - 100 Street
Grande Prairie, Alberta
T8V 3Y2
Phone: 532-3505

## ການສຶກສາ (Education)

ຊັ້ນ ປະຖົມ ແລະ ມັທຍົມ.

ຕາມກົດໝາຍແລ້ວ ເດັກ ອາຍຸ ແຕ່ ຫົກປີ ເຖິງ ສິບຫົກປີ ຈະເປັນຕ້ອງເຂົ້າໂຮງຮຽນ. ເທີມເຂົ້າໂຮງຮຽນເລີ້ມແຕ່ ທ້າຍເດືອນ ແປດ ແລະຈົບໃນເດືອນ ຫົກຂອງປີຕໍ່ໄປ. ໂຮງຮຽນ ລາງບ່ອນຮັບເອົາ ເດັກນ້ອຍ ທີ່ ອາຍຸບໍ່ເຖິງ ຫົກປີເທື່ອເຂົ້າຮຽນເວລາໂຮງຮຽນໄຂ ແຕ່ເດັກນ້ອຍຜູ້ນັ້ນຈະມີອາຍຸ ຫົກປີກ່ອນປີນັ້ນຈະໝົດ. ເຂົ້າໂຮງຮຽນປະຖົມແລະມັທຍົມນັ້ນ ບໍ່ຈຳເປັນຕ້ອງເສັຽຄ່າຮຽນ. ໂຮງຮຽນແລ່ນໄດ້ກໍ່ແມ່ນເງິນ ທີ່ເກັບມາຈາກ ພາສີທ້ອງຖິ່ນ

ແລະ ຮຽນໄດ້ທົ່ວໄປໃນແຂວງ. ໃນຫຼາຍໆ ທ້ອງຖິ່ນມີໂຮງຮຽນ
ທີ່ແຍກອອກ ສຳລັບລູກສິດທີ່ຖືສາສນາ ກາໂຕລິກ.

ສຳລັບຄົນທີ່ເຂົ້າ ຈາກແຂວງອື່ນໆ ທີ່ຮຽນເຖິງ ປີທີ ແປດ (ແປດປີ) ຫຼືຫຼຸດລົງ, ບໍ່ມີເປັນພາລະຂອງໂຮງຮຽນທີ່ລູກສິດເຂົ້າໃໝ່ນັ້ນ ຈະຮູ້ວ່າ ຈະເອົາລູກສິດຜູ້ນີ້ໄປໃສ່ຫ້ອງໃດ ແລະ ປີໃດທີ່ຈະເໝາະສົມກັບການສຶກສາ ທີ່ໄດ້ມາຈາກໂຮງຮຽນອື່ນໆ.
ສຳລັບລູກສິດ ປີທີ ເກົ້າ ຫາ ປີ (ຊັ້ນ) ສິບສອງ (Grade 9 to 12), ຈະຕິດຕໍ່ ກັບໂຮງຮຽນທີ່ຈະເຂົ້າໂດຍກົງ ເພື່ອຈະຮູ້ຈະຫຼຸບເທົ່າແນວໃດ ຫຼື ຕິດຕໍ່ກັບ:

Alberta Department of Education
Student Evaluation and Data Processing Services
2nd Floor, Devonian Building
11160 Jasper Avenue
Edmonton, Alberta
T5K 0L1
Phone: 427-5732

ສຳລັບ ຄົນທີ່ມາຈາກປະເທດອື່ນໆ ຕິດຕໍ່ກັບ:

Alberta Department of Education Registrar
9th Floor, Devonian Building
11160 Jasper Avenue
Edmonton, Alberta
T5K 0L1
ໂທຣະສັບ: 427-2045

ສຳລັບໃຊ້ວຽກຂອງ ກະຊວງ ນັ້ນ ຕ້ອງ ເສັຽ $5.00.

## ກາຍ ມັທຍົມ (Post Secondary)

ມີສະຖາບັນ ຫລາຍໆ ບ່ອນ ຢູ່ໃນ ແຂວງນີ້ ສຳລັບ ການສຶກສາ ກາຍ ມັທຍົມ. ຮາຍການໆ ຮຽນ ຢູ່ໃນສະຖາບັນເຫລົ່ານີ້ ຕອບສະໜອງ ຄວາມຕ້ອງການ ໃນການ ສຶກສາ, ການ ທຳອາຊີບ, ການພັກຜ່ອນ ຂອງ ປະຊາຊົນໃນ ແຂວງ ອານເບີຕາ. ຢູ່ໃນແຂວງນີ້ມີ:

4 ມຫາວິທຍາລັຍ
2 ໂຮງຮຽນການຊ່າງ
4 ໂຮງຮຽນອາຊີບ
10 ມຫາວິທຍາລັຍ (ກຳນົດສອງປີ) ປະຊາບານ
4 ມຫາວິທຍາລັຍ (ກຳນົດສອງປີ) ສ່ວນຕົວ.
ຫລາຍກວ່າ 50 ໂຮງຮຽນການຄ້າ ແລະ ສະຖາບັນ ພິເສດໄດ້ລົງທະບຽນ.

- ສະຖາບັນ ຝຶກແອບງານຕັ້ງຂຶ້ນມາ ຈາກ ແຜນການຂອງຣັຖບານ.
- ຮາຍການ ສຶກສາຜູ້ໃຫຍ່ ຕັ້ງ ຂຶ້ນ ມາຈາກ Further Education Councils ທົ່ວທຸກບ່ອນໃນ ແຂວງ.

ບ່ອນຢູ່ ແລະ ລາຍລະອຽດທົ່ວໄປ ສຳລັບ ກາຍ ມັທຍົມ ສຶກສາ ໃຫ້ຕິດຕໍ່ ກັບ:

Career Resources Branch
Alberta Advance Education & Manpower
5th Floor, Devonian Building
11160 Jasper Avenue
Edmonton, Alberta
T5K 0L1

ສຳລັບ ຮາຍລະອຽດ ໂດຍເຈາະຈົງ ກ່ຽວກັບ ຄ່າກັດ ເອົາລູກສິດເຂົ້າ ແລະ ຮາຍການ ຮຽນ ຕ່າງໆ ທີ່ມີຢູ່ ຄວນ ຕິດຕໍ່ ກັບສະຖາບັນ ນັ້ນ ໂດຍກົງ.

## ການທຽບທຽມ ຄວາມຮູ້ ແລະ ໃບປະກາສນິຍະບັດ ຈາກໂຮງຮຽນອາຊີບ. (Assessment of Education and Tradesman Documents).

ສຳລັບຜູ້ຈົບໂຮງຮຽນອາຊີບ ແລະ ມັທຍົມແລ້ວ.

ບຸກຄົນຜູ້ໄດ້ຮຽນມະຫາວິທຍາລັຍແລ້ວແຕ່ບໍ່ຈົບ ຄວນເອົາເຈັ້ງຫາໃບປະກາສນິຍະບັດໄປໃຫ້ມະຫາວິທຍາລັຍ ທຽບທຽມເຊິ່ງ. ຖ້າວ່າມີຄວາມຮູ້ດ້ານອາຊີບ ຈາກແຂວງອື່ນທີ່ ປະເທດອື່ນນັ້ນ ຄວນເອົາໃບປະກາສນິຍະບັດໄປໃຫ້ອົງການນັ້ນເຊິ່ງໃນອານເບີຕາ ເພື່ອຄວາມເຫັນຊອບ ກ່ອນຈະໄດ້ອະນຸຍາດໃຫ້ໃຊ້ຄວາມຮູ້ນັ້ນໄດ້.

Canada Employment Center ຈະສົ່ງທ່ານໄປຫາແຂນງວິຊາ ອົງການນັ້ນໂດຍສະເພາະ ເພື່ອຈະເອົາໃບປະກາສນິຍະບັດນັ້ນໄປໃຫ້ຜູ້ໃຫຍ່ເຫັນຊອບ ແລະ ຮັບເອົາ.

## ໃບປະກາສນິຍະບັດໃນການຄ້າ (Trade Certificate)

ຢູ່ໃນແຂວງອານເບີຕາມີຜູ້ມີການຄ້າຫຼາຍຢ່າງ ແລະ ບຸກຄົນທີ່ມີໃບປະກາສນິຍະບັດຂອງອານເບີຕາເທົ່ານັ້ນທີ່ໄດ້ຮັບອະນຸຍາດໃຫ້ລົງມືເຮັດວຽກ. ດ້ວຍເຫດນີ້, ພໍ່ຄ້າທຸກໆຄົນທີ່ມີຄຸນນະພາບໃນດ້ານນີ້ໃນປະເທດຂອງຂະເຈົ້າເອງ ຄວນເອົາລາຍລະອຽດຕ່າງໆໄປຫາກົມ the Apprenticeship and Trade Certification Branch ເພື່ອໃຫ້ກົມນີ້ເຫັນຊອບນຳ.

ສຳລັບການຄ້າລາງແນວ, ພໍ່ຄ້າມາຈາກແຂວງອື່ນໆໃນການາດາ ບາງທີຈຳເປັນຕ້ອງໄປສອບເສັງສາກ່ອນ! ຖ້າເສັງໄດ້ແລ້ວ ທາງກົມກໍຈະຕີກາສີແດງໃຫ້ (the Interprovincial Red Seal.) ເພື່ອແສດງໃຫ້ເຫັນວ່າບຸກຄົນຜູ້ນັ້ນມີຄວາມສາມາດໃນການຄ້າດ້ານນັ້ນ ແລະ ຈະເຮັດການຄ້ານັ້ນໄດ້ໃນທຸກໆແຂວງຂອງການາດາ.

ສົນໃຈຕິດຕໍ່ເຣື່ອງນີ້ກັບ:

Apprenticeship and Trade Certification Branch
Parkside Office Building
10926- 119 Street
Edmonton, Alberta
T5H 3P5

ໂທຣະສັບ: 427-3722

Apprenticeship and Trade Certification Branch
6th Floor, Alberta Place
1520-4th Street, S.W.
Calgary, Alberta
T2R 1H5

ໂທຣະສັບ: 261-6457

ບ່ອນເຮັດການ, ເງິນເດືອນ ແລະ ສະພາບ ຂອງ ວຽກການ.
(Work Environment, Wages and Working Conditions)

ຈຳນວນ ຊົ່ວໂມງ ເຮັດການ, ຣາຍໄດ້ ເປັນຊົ່ວໂມງ ຫຼື ເງິນເດືອນ, ຣາຍໄດ້ເວລາ ພັກຜ່ອນ, ຣາຍໄດ້ໃນ ມື້ບຸນ ຫຼື ມື້ພັກຕ່າງໆ, ເວລາຖືກໄລ່ ອອກ ການ, ຄົນງານ ຜູ້ຍິງ ເວລາ ອອກລູກ, ສິ່ງທີ່ເລົ່າມານີ້ ເທົ່າມີ ຕັ້ງ ຂຶ້ນມາ ຈາກ ກົດໝາຍ ຂອງ The Board of Industrial Relations ຢູ່ໃຕ້ ບັນຊາ ຂອງ The Alberta Labour Act.

ແຕ່ວ່າ ແຮງງານຕ່າງໆ ທີ່ສຳຄັນ ກໍ່ຄື ບຸກຄົນ ທີ່ເຮັດວຽກໃນ ດ້ານ ການ ປູກ ຝັງ, ການ ລ້ຽງ ສັດ ແລະ ຜູ້ທີ່ກຳຈ້າງ ເຮັດວຽກ ມາ ເຮືອນຊານ ບໍ່ເຂົ້າຢູ່ໃນ ຄວາມ ປົກປ້ອງ ຂອງ ກົດໝາຍ ນີ້.

ຖ້າມີ ຄຳຖາມ ຫຼື ການ ຕໍ່ວ່າ ໃນເຣື່ອງ ເງິນ ຊົ່ວໂມງ ຫຼື ເງິນເດືອນ ຫຼື ສະພາບ ຂອງ ບ່ອນເຮັດ ການ ໃນເມື່ອ ຖືກຮັບ ຈ້າງ ເຮັດວຽກ ຢູ່ໃນ ອານເຂດ ແລ້ວ, ຄວນໄປ ລົມ ກັບ ເຈົ້ານາຍ ຜູ້ສ່ຳ ໃກ້ຊິດ ວຽກ ມີຢູ່ ບ່ອນ ໃກ້ທີ່ສຸດ ຂອງ ທ່ານ ຢູ່ ກັບ The Board of Industrial Relations ເພື່ອ ຂໍ ຄວາມ ຊ່ວຍເຫຼືອ.

ຢູ່ Edmonton ແລະ Calgary ກໍມີຢູ່ທີ່:

Alberta Labour
Labour Standards Branch
Princeton Place
10339 - 124 Street
Edmonton, Alberta
T5N 3W1

ໂທຣະສັບ: 427-3731

Alberta Labour
Labour Standards Branch
Ford Tower
633 - 6 Avenue, S.W.
Calgary, Alberta
T2P 2Y5

ໂທຣະສັບ: 261 - 6555.

## ນໍາເບີ ບັດປະຈໍາຕົວ ແລະ ສໍາລັບເຮັດວຽກ.
## (Social Insurance)

ບຸກຄົນ ທຸກໆ ຄົນ ທີ່ເຮັດການ ຢູ່ການາດາ ຈໍາເປັນຕ້ອງມີ ນໍາເບີ ບັດປະຈໍາຕົວ. ຄວນເອົາໃບຄໍາຮ້ອງ ຂໍນໍາເບີ ປະຈໍາຕົວ ກ່ອນຈະລົງມືເຮັດການ ເພື່ອປະກັນວ່າ ທ່ານໄດ້ຈ່າຍເງິນໃຫ້ລັດຖະບານ ເວລາເຮັດວຽກຢູ່ນັ້ນ. ຫຼັກຖານອັນນີ້ ກໍ່ຈະສາມາດ ຊ່ວຍທ່ານໃຫ້ໄດ້ຮັບ ຄວາມຊ່ວຍເຫຼືອ ເວລາວ່າງງານ ແລະ ສໍາລັບ ການອອກກິນເບັ້ຍບໍານານ.

ເອົາໃບຄໍາຮ້ອງ ຂໍນໍາເບີ ນີ້ໄດ້ຢູ່ກັບ Canada Employment ທີ່ຢູ່ໃກ້ງ ສາຍ.

## ຣາຍໄດ້ຢ່າງຕໍ່າ (Minimum Wage).

ຜູ້ເຮັດວຽກເກືອບທຸກໆຄົນ ຢູ່ໃນຄວາມປົກຄອງຂອງ ກົດໝາຍການຕໍ່ວ່າ ແລະເທີນດ໌ ສໍາລັບ ນາຍແລະລູກນ້ອງ. ສໍາລັບຜູ້ທີ່ບໍ່ຢູ່ໃນຄວາມປົກປ້ອງນີ້ ແລ້ວ, ຣາຍໄດ້ເປັນຊົ່ວໂມງ ກໍ່ຈະຕ່າງແຕ່ງຕັ້ງ ຕາມກົດໝາຍເຫຼົ່ານີ້.

ຕັ້ງແຕ່ວັນທີ 1 ເດືອນ 3 ປີ 1977, ກົດໝາຍບອກວ່າ ຜູ້ອາຍຸແຕ່ 18 ປີ ຂຶ້ນໄປ ຄວນໄດ້ຮັບ #3.00 ຕໍ່ຊົ່ວໂມງ ຢ່າງ

ນ້ອຍ ແລະ #2.85 ສຳລັບຜູ້ທີ່ອາຍຸຕ່ຳກວ່າ 18 ປີ.

## ລາຍໄດ້ເພີ່ມເວລາ (Overtime)

ໃນກົດໝາຍຂອງ ອານເບີຕາ, ຜູ້ທີ່ເຮັດວຽກ ບໍ່ຄວນເຮັດວຽກເກີນ 44 ຊົ່ວໂມງ ຕໍ່ອາທິດ, ບໍ່ໃຫ້ເກີນ ມື້ລະແປດຊົ່ວໂມງ. ຜູ້ທີ່ເຮັດວຽກເກີນກວ່ານີ້, ນາຍ ຄວນຈ່າຍເງິນເພີ່ມເວລາໃຫ້ ໂດຍ ເຕີມໃຫ້ ນຶ່ງເທົ່າເຄິ່ງ ຂອງ ລາຍໄດ້ ແຕ່ລະ ຊົ່ວໂມງ (1½).

## ມື້ພັກທົ່ວໄປ (General Holidays).

ຜູ້ເຮັດວຽກ ມີສິດໄດ້ຮັບເງິນເດືອນໃນມື້ພັກທົ່ວໄປ:
ມື້ຂຶ້ນປີໃໝ່, ມື້ວັນສຸກ (ບຸນ Easter), ບຸນ Victoria Day, ບຸນຊາດ ການາດາ (Canada Day) ມື້ບຸນ ຂອບຄຸນພະເຈົ້າ (Thanksgiving Day), ບຸນ ນັກລົບເກົ່າ (Rememberance Day), ມື້ບຸນໄນແອນ (Christmas Day).

## ລາຍໄດ້ໃນມື້ພັກ (Vacation Pay).

ຫຼັງຈາກເຮັດວຽກໄດ້ປີເຕັມແລ້ວ, ຄົນງານ ມີສິດໄດ້ຮັບມື້ພັກ ສອງ ອາທິດ ແຕ່ເຈົ້ານາຍຈ່າຍເງິນໃຫ້ຕະຫຼອດ ສອງ ອາທິດ. ຖ້າວ່າຄົນງານ ເຮັດວຽກນ້ອຍກວ່າ ສິບສອງເດືອນ, ຄົນງານ ຜູ້ນັ້ນມີສິດໄດ້ຮັບເງິນ ມື້ພັກ ຈຳນວນ ສີ່ເປີເຊັນ (4%) ຂອງ ລາຍໄດ້ ທັງໝົດ ຕັ້ງແຕ່ມື້ເຮັດວຽກ ບ່ອນນັ້ນ ມາ.

## ລາຍໄດ້ຖືກຫັກອອກ (Wage Deductions).

ຄົນງານ ຫຼື ຜູ້ເຮັດວຽກໃນ ອານເບີຕາ ຄວນ ຮູ້ວ່າ ເງິນເດືອນ ຂະເຈົ້າຈະເປັນຕ້ອງ ຖືກຫັກອອກ: ພາສີ ລາຍໄດ້, ສຳລັບ ເບັ້ຍບຳນານ, ແລະ ລາຍໄດ້ເວລາວ່າງງານ.

ເຈົ້ານາຍ ບາງຄົນ ຊ່ວຍລູກນ້ອງ ໃນເລື່ອງ ສະພິບານ, ເງິນບໍານານໃນບໍລິສັດ, ການປະກັນພັຍເປັນກຸ່ມ, ປະກັນພັຍເວລາເສັຍອົງຄະ, ສະພິບານຕ່າງໆ ເຊັ່ນ ຈ່າຍ ຄ່າຢາ ແລະ ຄ່າໝໍ ປົວແຂ້ວ (extended health care insurance) ແລະ ການ ຊື້ເຂົ້າຮຸ້ນສ່ວນ.

## ການປ້ອງກັນຄົນງານ (Workers' Compensation Coverage).

ຄົນງານສ່ວນຫຼາຍ ຢູ່ ອານເບີຕາໄດ້ຮັບຄວາມປ້ອງກັນ ຈາກ the Workers' Compensation Act ທີ່ມີຈຸດປະສົງ ປ້ອງກັນ ແລະ ຊ່ວຍ ຄົນງານ ທີ່ເສັຍອົງຄະ ຈາກອຸປະຕິເຫດ ຫຼື ພະຍາດ ເກີດຂຶ້ນໃນໄລຍະການ ຫຼື ນອກໄລຍະການ. ເຈົ້ານາຍ ຈ່າຍ ຄ່າຕ່າງໆໃຫ້ ໂດຍບໍ່ຕັດ ເອົາເງິນ ຈາກເງິນເດືອນຂອງ ຄົນງານ. ການຊ່ວຍເຫຼືອນີ້ ຂຶ້ນຢູ່ກັບ ຄວາມຍືດຍາວຂອງການເຈັບເປັນ ແລະ ລາຍໄດ້ແຕ່ລະເດືອນ.

## ສະມາຄົມລູກຈ້າງ (Trade Unions).

ສະມາຄົມລູກຈ້າງ, ອົງການຫຼື ຜູ້ຕາງໜ້າ ຄົນງານ ຕິດຕໍ່ ຫຼື ຕໍ່ສູ້ກັບເຈົ້ານາຍ ເພື່ອ ຄົນງານທົ່ວໄປໃນເລື່ອງ ເງິນເດືອນ, ສະພາບຂອງວຽກ ແລະ ບ່ອນເຮັດວຽກ, ຊົ່ວໂມງເຮັດວຽກ, ລາຍໄດ້ເວລາພັກການ ແລະ ລາຍໄດ້ພິເສດ ເລົ່ານີ້ມີຂຶ້ນທຸກໆບ່ອນ ຮັບເອົາຄົນເຮັດການໃນ ອານເບີຕາ. ລາງບ່ອນ ການເປັນສະມາຊິກນັ້ນ ເອົາຕາມໃຈໃຜລາວ ແຕ່ສ່ວນຫຼາຍນັ້ນ ມີຄວາມຕົກລົງລະຫວ່າງ ສະມາຄົມ ແລະ ເຈົ້ານາຍວ່າ ຜູ້ບໍ່ເປັນສະມາຊິກ ແລ້ວບໍ່ມີສິດ ຖືກຮັບຈ້າງເຮັດການ.

ຈະຫາຄວາມຊ່ວຍເຫຼືອຢູ່ໃສ (Where to get help).

ຖ້າມີບັນຫາຕ່າງໆ ໃນການຕັ້ງຖິ່ນຖານຢູ່ ອານເບີຕາ, ອົງການຂ້າງລຸ່ມນີ້ ອາດໃຫ້ຄວາມແຈ່ມແຈ້ງໃນການຫາຄວາມຊ່ວຍເຫຼືອທີ່ຕ້ອງການ :

- ແຫຼ່ງຂ່າວ ລັດຖະບານ ອານເບີຕາ (Alberta Government Information) ຣາຍລະອຽດກ່ຽວກັບ ຄວາມຮັບຜິດຊອບ ຂອງ ລັດຖະບານ ອານເບີຕາ, ຄວນໂທຣະສັບໄປ ຫາ ຫ້ອງການ ຂອງ ລັດຖະບານ ອານເບີຕາ ທີ່ຢູ່ໃກ້ ແລະ ຂໍ ຢາກ ກັບ The Rite Operator.
- ຫ້ອງການ ຕາມເຂດ ຂອງ ກົມສັງຄົມສົງເຄາະ ແລະ ແພດ.
- ຫ້ອງການ ປ້ອງກັນ ສັງຄົມສົງເຄາະ ທີ່ຕັ້ງຢູ່ໃກ້ກັບບ່ອນທ່ານຢູ່.
- ສູນການ ຊອກວຽກງານ ການາດາ (Canada Employment Centres)
- ສູນການ ທາງ ຫາ ອາຊີບ ຂອງ ອານເບີຕາ (Alberta Career Centres)

ຣາຍລະອຽດ ກ່ຽວກັບວິທີ ສົງເຄາະ ຕາມໝູ່ຄະນະ ບ້ານເມືອງ. (Community Services Information).

ຖ້າທ່ານຕັ້ງຫຼັກຖານຢູ່ ເອັດມັນຕັນ ຫຼື ການກາຣີ (Edmonton or Calgary), ຕິດຕໍ່ກັບ AID ທີ່ເປັນສະມາຄົມ ຕິດຕໍ່ກັບ ສຳນັກງານ ຕ່າງໆ ກ່ຽວກັບ ສັງຄົມສົງເຄາະ ທີ່ຕັ້ງຢູ່ໃນຕົວເມືອງ ແຕ່ລະເມືອງ.

ຢູ່ ເອັດມັນຕັນ, ໂທຣະສັບ : 426-3242

ຢູ່ ການກາຣີ, ໂທຣະສັບ : 268-2341

ຢູ່ສະມາຄົມອື່ນໆ ຕິດຕໍ່ກັບ ຫ້ອງການ ເທສບານ (ເມືອງ, ບ້ານ, ຕົ້ນ) ສຳລັບ ການສົງເຄາະ ທີ່ມີຢູ່ໃນເຂດບ່ອນຢູ່ ຫຼື ເບິ່ງ ເບິ່ງຢູ່ປື້ມ (ຫຼືອງ) ໃນປື້ມໂທຣະສັບ ບ່ອນມີຊື່ "Social Services".

ຣັຖບານລວງ ແຂວງ ອານເບີຕາ.
ຫ້ອງການ ສຶກສາ ຊັ້ນສູງ ແລະ ແຮງງານ ທີ່ຕັ້ງຢູ່ນອກ ອານເບີຕາ:

47 Upper Grosvenor Street
London, England
W1X 9PG
ໂທຣະສັບ: 01-491-3423

65 Queen Street West
Suite 410
Thomson Building
Toronto, Ontario, Canada
M5H 2M5
ໂທຣະສັບ: 416-363-1678

Alberta
ADVANCED EDUCATION AND MANPOWER
Reception and Settlement Services

ອາລເບີຕາ
ສຶກສາ ຊັ້ນສູງ ແລະ ແຮງງານ
ແປຈາກ ພາສາອັງກິດໂດຍ:
ເທບ ຕາວອນສຸກ.